**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຫ້ອງການ

ເລກທີ 284/ຫກ

ນະຄອນຫຼວງວຽງຈັນ,ວັນທີ 27 มิຖຸນາ 2024

## ໜັງສືແຈ້ງເຊີນປະມູນ

**ໂຄງການສ້ອມແປງຕຶກອາຄານ ແລະ ລະບົບແອເຢັນສາງເກັບຮັກສາສຳເນົາຟິມຮູບເງົາລາວ**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 1259/ຖວທ, ລົງວັນທີ 06 ທັນວາ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການສ້ອມແປງຕຶກອາຄານ ແລະ ລະບົບແອເຢັນສາງເກັບຮັກສາສຳເນົາຟິມຮູບເງົາລາວ ສະບັບເລກທີ 626/ຖວທ, ລົງວັນທີ 21 ມິຖຸນາ 2024;
- ອີງຕາມ ແຈ້ງການ ແຈ້ງແຜນການລົງທຶນຂອງລັດປະຈຳປີ 2024 ສະບັບເລກທີ 10/ຖວທ, ລົງວັນທີ 05 ມີນາ 2024 ແລະ ໃບແຈ້ງຕົວເລກງົບປະມານລົງທຶນຂອງລັດພາກ 67 ຂອງກົມຮູບເງົາ ສະບັບເລກທີ 166/ກຜຮ.1 ລົງວັນທີ 06 ມີນາ 2024.

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ (ບ້ວງທຶນປົກກະຕິ) ແຜນປີ 2024 ໂຄງການສ້ອມແປງຕຶກອາຄານ ແລະ ລະບົບແອເຢັນສາງເກັບຮັກສາສຳເນົາຟິມຮູບເງົາລາວ. ສຳລັບໄລຍະເວລາຂອງການສ້ອມແປງ ແລະ ຈັດຊື້ອຸປະກອນທັງໝົດແມ່ນບໍ່ໃຫ້ກາຍ 02 ປີ 06 ເດືອນ ນັບຕັ້ງແຕ່ມື້ອອກໃບສັ່ງວຽກໃຫ້ຈັດຕັ້ງປະຕິບັດຈົນເຖິງມື້ມອບ - ຮັບໂຄງການ;
2. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍເຊີນບັນດາ ບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນສ້ອມແປງຕຶກອາຄານ ແລະ ລະບົບແອເຢັນສາງເກັບຮັກສາສຳເນົາຟິມຮູບເງົາລາວ;
3. ໃນການປະມູນແມ່ນຈະດຳເນີນການປະມູນຮູບແບບເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນແມ່ນອະນຸຍາດໃຫ້ທຸກໆ ບໍລິສັດ ທີ່ມີຄຸນນະວຸທິເໝາະສົມ, ມີໃບທະບຽນວິສາຫະກິດ, ທີ່ຖືກຕ້ອງຕາມກົດໝາຍ (ສຳເນົາດ້ານຫຼັງມາພ້ອມ) ແລະ ມີໃບອະນຸຍາດດຳເນີນທຸລະກິດທາງດ້ານການກໍ່ສ້າງ, ສ້ອມແປງເຄຫາສະຖານປະຈຳປີ 2024, ໃບອະນຸຍາດດຳເນີນທຸລະກິດດ້ານໄຟຟ້າ ແລະ ໃບຢັ້ງຢືນການມອບອາກອນປີ 2023;
5. ທຸກໆ ບໍລິສັດ ຕ້ອງປະກອບບົດບັນທຶກການກວດກາບັນຊີແບບຄົບຊຸດປະຈຳປີ 2023 ອອກໂດຍກົມສ່ວຍສາອາກອນ (ຍົກເວັ້ນບໍລິສັດເປີດໃໝ່) ແລະ ການເຄື່ອນໄຫວບັນຊີສຳຮອງ ບໍລິສັດ ໄລຍະ 03 ເດືອນຜ່ານມາວົງເງິນບໍ່ຫຼຸດ

5,000,000,000 ກີບ ຂຽນເປັນໂຕໜັງສື (ຫ້າຕື້ກີບ) ແລະ ບັນຊີສຳຮອງບໍ່ໃຫ້ກາຍ 01 ອາທິດກ່ອນມື້ເປີດຊອງປະມູນ;

6. ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນຊື້ຊອງປະມູນ ໄດ້ນຳຄະນະຮັບຜິດຊອບໂຄງການຢູ່ທີ່ ຫ້ອງການກົມຮູບເງົາ (ຫ້ອງພະແນກສຳເນົາ), ຫ້ອງການກົມແຜນການ ແລະ ການຮ່ວມມືສາກົນ (ພະແນກແຜນການ ແລະ ການລົງທຶນ) ສອບຖາມຂໍ້ມູນເພີ່ມເຕີມໂທ: 020 99704492 ທ່ານ ສີສະຫວາດ ຮອງສົມບັດ ແລະ 020 2223 9394 ນາງ ຄຳບາງ ສຸລິມາບຸນເລີດ. ການຂາຍຊອງປະມູນເລີ່ມແຕ່ວັນທີ 28 ມິຖຸນາ 2024(ຕາມໂມງລັດຖະການ)ໃນລາຄາ 3,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
7. ທຸກໆ ຊອງປະມູນຕ້ອງໄດ້ປະກອບການຄໍ້າປະກັນການປະມູນດ້ວຍເງິນສົດ, ແຊັກ(ວີຊ້າ) ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານບໍ່ໃຫ້ຫລຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ແລະ ໃສ່ມາພ້ອມຊອງປະມູນ;
8. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງຂອງວັນທີ 02 ສິງຫາ 2024 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຖະໜົນເສດຖາທິລາດເລກທີ 01000, ຕູ້.ປນ.122 ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ທຸກຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງຂອງວັນທີ 02 ສິງຫາ 2024 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງ ບໍລິສັດ ເຂົ້າຮ່ວມ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ບຸນໄທ ທິ່ງທິລາດ